**ມິຊຊາອາທິດທີ 27 ກຳນົດທຳມະດາ ປີ B**

**ວັນທີ 3 ຕຸລາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 10, 2-16**

ໃນເວລານັ້ນ, ພວກຟາຣີເຊວລາງຄົນພາກັນມາຫາພຣະເຢຊູເຈົ້າເພື່ອຈັບຜິດພຣະອົງ. ພວກເຂົາທູນຖາມພຣະອົງວ່າ: “ມີອະນຸຍາດຢ່າຮ້າງກັບພັນລະຍາຂອງຕົນໄດ້ບໍ?” ພຣະອົງຕອບວ່າ: “ໂມແຊໄດ້ສັ່ງບອກພວກເຈົ້າແນວໃດ?” ພວກເຂົາທູນວ່າ: “ໂມແຊໄດ້ອະນຸຍາດທຳໜັງສືຢ່າຮ້າງກັນໄດ້”.

ພຣະເຢຊູເຈົ້າກ່າວຄ້ານວ່າ: “ໂມແຊໄດ້ຕັ້ງກົດນີ້ຂຶ້ນມາກໍຍ້ອນພວກເຈົ້າໃຈດື້ໃຈແຂງນັ້ນແລ້ວ. ແຕ່ຕົ້ນສ້າງໂລກ,ເມື່ອພຣະເປັນເຈົ້າສ້າງມະນຸດມາ,ພຣະອົງໄດ້ສ້າງຜູ້ຊາຍແລະຜູ້ຍິງ. ດ້ວຍເຫດນີ້, ຜູ້ຊາຍຈະປະພໍ່ແມ່ໄປຢູ່ກິນກັບພັນລະຍາຂອງຕົນ, ແລະທັງສອງຈະເປັນເນື້ອໜຶ່ງໜັງດຽວ. ດັ່ງນີ້ບໍ່ແມ່ນສອງຄົນອີກແລ້ວ, ແຕ່ເປັນເນື້ອໜຶ່ງໜັງດຽວ. ດັ່ງນີ້ມະນຸດຢ່າໄດ້ແບ່ງແຍກສິ່ງທີ່ພຣະເປັນເຈົ້າໄດ້ຮວມໄວ້ແລ້ວ.”

ເມື່ອຫລັບເມືອຮອດເຮືອນ, ພວກສາວົກທູນຖາມພຣະອົງອີກກ່ຽວກັບເລື່ອງນີ້. ພຣະອົງກ່າວຕອບພວກເຂົາວ່າ: “ຜູ້ໃດປະຮ້າງກັບພັນລະຍາຂອງຕົນ ແລະໄປແຕ່ງງານໃໝ່ກໍຜິດປະເວນີຕໍ່ພັນລະຍາຄົນກ່ອນ; ຖ້າຍິງຜູ້ໃດປະຮ້າງກັບສາມີຂອງຕົນແລະໄປແຕ່ງງານໃໝ່ກໍຜິດປະເວນີເໝືອນກັນ.”

ແລ້ວເຂົາໄດ້ເອົາເດັກນ້ອຍມາຫາພຣະເຢຊູເຈົ້າ, ເພື່ອຂໍໃຫ້ພຣະອົງລູບໂຊມເຂົາ, ແຕ່ພວກລູກສິດຂັດຂວາງໄວ້. ເມືອເຫັນດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງຕິຮ້າຍພວກລູກສິດວ່າ: “ຈົ່ງປະໃຫ້ພວກເດັກນ້ອຍມາຫາເຮົາ, ຢ່າຫ້າມເຂົາ. ຍ້ອນວ່າອານາຈັກຂອງພຣະເຈົ້າເປັນຂອງຜູ້ທີ່ມີໃຈເປັນຄືເດັກເຫລົ່ານີ້. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: “ຜູ້ໃດບໍ່ຕ້ອນຮັບອານາຈັກຂອງພຣະເຈົ້າຄືເດັກນ້ອຍແລ້ວ, ກໍຈະເຂົ້າໃນອານາຈັກຂອງພຣະເຈົ້າບໍ່ໄດ້”. ແລ້ວພຣະອົງຊົງອູ້ມແລະອວຍພອນໃຫ້ເດັກນ້ອຍເຫລົ່ານັ້ນ ດ້ວຍການປົກມືເທິງເຂົາ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

"ຜູ້ຊາຍແລະຜູ້ຍິງບໍ່ແມ່ນສອງຄົນອີກ,ແຕ່ເປັນເນື້ອໜຶ່ງໜັງດຽວ". ຄວາມເປັນໜຶ່ງດຽວຂອງມະນຸດນີ້ສະແດງໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງມະນຸດກັບສັດສາວາສິ່ງ. ເພາະໃນບົດອ່ານທີໜຶ່ງຈາກໜັງສືປະຖົມມະການ, ເມື່ອພຣະເຈົ້າສ້າງສັດທັງຫລາຍພຣະອົງບໍ່ໄດ້ສ້າງສັດໂຕແມ່ຈາກກະດູກຂ້າງຂອງສັດໂຕຜູ້. ແຕ່ພຣະອົງສ້າງສັດແຕ່ລະໂຕແຕກຕ່າງກັນ. ແລະລະຫວ່າງສັດກັບມະນຸດກໍມີຄວາມແຕກຕ່າງກັນດ້ວຍ. ດັ່ງນີ້ອາດາມຈຶ່ງບໍ່ພົບເຫັນສັດໂຕໃດສາມາດມາຢູ່ຮ່ວມກັບເຂົາເພື່ອຊ່ວຍເຫລືອເຂົາໄດ້. ເພາະສະນັ້ນ, ພຣະເຈົ້າຈຶ່ງໄດ້ສ້າງເອວາທີ່ມີຮູບພາບລັກສະນະຄ້າຍຄືກັບອາດາມ .ຍ້ອນເອວາຖືກສ້າງມາຈາກກະດູກແລະເນື້ອໜັງຂອງອາດາມ. ດັ່ງນັ້ນ, ທັງສອງຈຶ່ງເໝາະສົມກັນແລະຢູ່ຮ່ວມກັນໄດ້.

ຄວາມເປັນໜຶ່ງດຽວລະຫວ່າງຊາຍແລະຍິງຍັງສະທ້ອນໃຫ້ເຫັນວ່າມະນຸດມີຄວາມຄ້າຍຄືກັບພຣະເຈົ້າ. ເພາະພຣະເຈົ້າເຖິງວ່າພຣະອົງເປັນພຣະເຈົ້າໜຶ່ງພຣະເຈົ້າດຽວ, ແຕ່ກໍເປັນສາມພຣະອົງ: ພຣະບິດາ, ພຣະບຸດແລະພຣະຈິດ. ທັງສາມພຣະອົງບໍ່ໄດ້ແຍກອອກຈາກກັນ, ແຕ່ເປັນໜຶ່ງດຽວກັນ. ດ້ວຍເຫດນີ້, ຄວາມແຕກແຍກລະຫວ່າງສາມີພັນລະຍາ, ລະຫວ່າງມະນຸດດ້ວຍກັນນັ້ນບໍ່ໄດ້ມາຈາກພຣະເຈົ້າແລະຜິດຕໍ່ຄຳສອນຂອງພຣະອົງ. ຄວາມແຕກແຍກຜິດຖຽງກັນທຳໃຫ້ມະນຸດເສຍຄວາມຄ້າຍຄືກັບພຣະເຈົ້າແລະບໍ່ໄດ້ຢູ່ໃນພຣະອົງ. ເມື່ອມະນຸດບໍ່ໄດ້ຢູ່ໃນພຣະເຈົ້າ, ເຂົາກໍຢູ່ໃນຜີປີສາດ. ເພາະຜີປີສາດເປັນຜູ້ທຳໃຫ້ມີການແຕກແຍກຜິດຖຽງກັນ. ເພາະສະນັ້ນ, ຄຳຖາມຂອງພວກຟາຣີເຊທີ່ຖາມພຣະເຢຊູເຈົ້າວັນນີ້ກ່ຽວກັບການຢ່າງຮ້າງຈຶ່ງເປັນຄຳຖາມທີ່ຜິດຕໍ່ພຣະບັນຍັດແຫ່ງຮັກທີ່ມີຕໍ່ພຣະເຈົ້າແລະຕໍ່ເພື່ອນມະນຸດ. ຜິດຕໍ່ຄວາມຮັກທີ່ມີຕໍ່ພຣະເຈົ້າ ຍ້ອນມະນຸດບໍ່ຍອມຮັບຄວາມເປັນໜຶ່ງດຽວທີ່ມາຈາກພຣະເຈົ້າ. ແລະມະນຸດທຳໃຫ້ຮູບພາບຂອງພຣະເຈົ້າທີ່ມີໃນຕົວເອງນັ້ນສູນເສຍໄປ. ສ່ວນຜິດຕໍ່ຄວາມຮັກທີ່ມີຕໍ່ເພື່ອນມະນຸດນັ້ນ ຍ້ອນມະນຸດບໍ່ຍອມຮັບຜູ້ອື່ນໃນສິ່ງທີ່ເຂົາເປັນແລະເຂົາມີເໝືອນກັບສິ່ງສ້າງທີ່ມາຈາກພຣະເຈົ້າແລະຄ້າຍຄືກັບພຣະອົງ.

ບໍ່ວ່າຈະເປັນການຢ່າງຮ້າງຫລືການຜິດຖຽງກັນທີ່ກ່າວມາຂ້າງເທິງນັ້ນລ້ວນແຕ່ມາຈາກໃຈຂອງມະນຸດ. ຍ້ອນມະນຸດມີຈິດໃຈແຂງກະດ້າງ, ຈິດໃຈບໍ່ຊື່ກົງ, ຈິດໃຈທີ່ຂາດຄວາມຮັກ. ເຮັດແນວໃດພວກເຮົາຈຶ່ງສາມາດັດແປງແກ້ໄຂຈິດໃຈພວກເຮົາໄດ້? ພວກເຮົາຕ້ອງເປີດໃຈໃຫ້ພຣະເຈົ້າ, ໃຫ້ວາຈາແລະຄວາມຮັກຂອງພຣະອົງຊຶມຊາບເຂົ້າໃນຈິດໃຈພວກເຮົາ. ເພື່ອພຣະອົງຈະໄດ້ຜັນປ່ຽນດວງໃຈທີ່ເປັນກ້ອນຫີນຂອງພວກເຮົານັ້ນໃຫ້ເປັນກ້ອນຊີ້ນທີ່ເຕັມດ້ວຍຄວາມຮັກເມດຕາເໝືອນກັບພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດປ່ຽນດວງໃຈທີ່ແຂງກະດ້າງຂອງລູກໃຫ້ເປັນດວງໃຈທີ່ອ່ອນຫວານ, ສຸພາບເໝືອນກັບດວງພຣະໄທຂອງພຣະອົງ. ເພື່ອລູກຈະໄດ້ຮູ້ຈັກຮັກພຣະອົງແລະຮັກຄົນອື່ນເໝືອນກັບຮັກຕົວລູກເອງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ